ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ຫ້ອງການ

ເລກທີ 98 /ຫກ

ນະຄອນຫຼວງວຽງຈັນ, ວັນທີ 08 ກຸມພາ 2022

## ໜັງສືແຈ້ງການ

**ເຖິງ**: ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດ ທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕຳຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດ.

**ເລື່ອງ**: ເພີ່ມທະວີຄວາມມີສະຕິລະວັງຕົວ ແລະ ປ້ອງກັນຄວາມສ່ຽງ ໃນການລົງທຶນໃນທຸລະກິດທີ່ບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ.

- ອີງຕາມກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມກົດໝາຍວ່າດ້ວຍທະນາຄານທຸລະກິດ (ສະບັບປັບປຸງ) ສະບັບເລກທີ 56/ສພຊ, ລົງວັນທີ 7 ທັນວາ 2018;
- ອີງຕາມດຳລັດ ວ່າດ້ວຍສະຖາບັນການເງິນຈຸລະພາກ ສະບັບເລກທີ 460/ລບ, ລົງວັນທີ 03 ຕຸລາ 2012.

ໃນສະພາບການທີ່ມີການລະບາດຂອງພະຍາດໂຄວິດ-19 ຊຶ່ງໄດ້ມີຜົນກະທົບໃນວົງກວ້າງຕໍ່ກັບສະພາບເສດຖະກິດຂອງພາຍໃນ ແລະ ພາກພື້ນ, ຄວາມຫຍຸ້ງຍາກໃນການດຳເນີນທຸລະກິດ, ແບບແຜນການດຳລົງຊີວິດຂອງປະຊາຊົນລາວ ແມ່ນໄດ້ຮັບຜົນກະທົບໃນລະດັບທີ່ເຫັນໄດ້ຢ່າງຊັດເຈນໃນໄລຍະສອງປີຜ່ານມາຄືແຕ່ປີ 2019-2021.

ທະນາຄານແຫ່ງ ສປປ ລາວ ແມ່ນອົງກອນຄຸ້ມຄອງມະຫາພາກດ້ານເງິນຕາໃຫ້ມີສະຖຽນລະພາບ, ຄຸ້ມຄອງສະຖາບັນການເງິນໃຫ້ມີຄວາມໝັ້ນຄົງ ແລະ ຄຸ້ມຄອງລະບົບການຊຳລະໃຫ້ມີປະສິດທິພາບ, ຊຶ່ງເຮັດໜ້າທີ່ພິຈາລະນາຄົ້ນຄ້ວາອອກອະນຸຍາດ, ຄຸ້ມຄອງຄວາມໝັ້ນຄົງ ແລະ ຊຸກຍູ້ສົ່ງເສີມໃຫ້ສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງ ແລະ ການເຄື່ອນໄຫວທີ່ກ່ຽວຂ້ອງ ໃຫ້ສອດຄ່ອງກັບລະບຽບກົດໝາຍ ແລະ ສະໜອງການບໍລິການທີ່ມີຄຸນນະພາບ, ມີຄວາມໂປ່ງໃສ ແລະ ໃຫ້ບໍລິການຢ່າງທົ່ວເຖິງ.

ໃນສະພາບການທີ່ ເຕັມໄປດ້ວຍກາລະໂອກາດ ແລະ ສິ່ງທ້າທາຍ ໃນການເຮັດທຸລະກິດທາງດ້ານການເງິນນີ້ ຍັງມີການເຄື່ອນໄຫວໃຫ້ບໍລິການທາງດ້ານການເງິນທີ່ບໍ່ໄດ້ຮັບອະນຸຍາດ, ມີຄວາມສ່ຽງສູງ ແລະ ບໍ່ສອດຄ່ອງຕາມ



ທະນາຄານແຫ່ງ ສປປ ລາວ, ຖະໜົນ ຍອນເນ, ນະຄອນຫຼວງວຽງຈັນ, ຕູ້ໄປສະນີ 19, ໂທລະພິມ: 4304 BNL.VTE.LS
ໂທລະສານ: (856)-21-213108 ໂທລະສັບ: 213109-213110 Email: BOL@bol.gov.la; www.bol.gov.la

ກົດໝາຍ ຍັງບໍ່ໄດ້ຮັບອະນຸຍາດຈາກຂະແໜງການກ່ຽວຂ້ອງຂອງລັດ ໂດຍສະເພາະບັນດາຫົວໜ່ວຍທຸລະກິດຮ້ານຂາຍຄຳຈຳນວນໜຶ່ງໄດ້ໃຫ້ບໍລິການໃນຮູບແບບລະດົມທຶນ, ຮັບຝາກເງິນ, ອອມຄຳ ຫຼື ການຊື້ຄຳຍ່ອຍ ຊຶ່ງໄດ້ມີການໂຄສະນາຜ່ານສື່ ແລະ ຊ່ອງທາງອອນລາຍຕ່າງໆ ໂດຍກ່າວອ້າງວ່າໃຫ້ຜົນຕອບແທນສູງ, ມີຄວາມປອດໄພ ແລະ ໂປ່ງໃສ.

ທະນາຄານແຫ່ງ ສປປ ລາວ ຂໍຖືເປັນກຽດແຈ້ງການມາຍັງພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ພະນັກງານ ແລະ ທະຫານຕຳຫຼວດ ຕະຫຼອດຮອດຄົນຕ່າງປະເທດ ທີ່ອາໄສຢູ່ ສປປ ລາວ ຈົ່ງມີສະຕິຕໍ່ການໂຄສະນາເກີນຄວາມເປັນຈິງ ທີ່ຊັກຊວນລົງທຶນທີ່ໃຫ້ຜົນຕອບແທນສູງ ເປັນຕົ້ນ ການຊື້ວັດຖຸມີຄ່າປະເພດຄຳ, ເງິນ, ເພັດ, ພອຍ, ວັດຖຸໂບຮານ ຫຼື ສິ່ງທີ່ມີມູນຄ່າສູງຂອງບຸກຄົນ, ກຸ່ມຄົນ, ນິຕິບຸກຄົນ ຫຼື ອົງກອນ. ພ້ອມນັ້ນ ກໍໃຫ້ເພີ່ມການຊອກຮູ້ຂໍ້ມູນຂ່າວສານ ທີ່ຮອບຄອບ, ພຽງພໍໃຫ້ແກ່ການຕັດສິນໃຈຂອງຕົນກ່ອນການລົງທຶນໃນໂຄງການໃດໜຶ່ງ, ຮູບແບບການລົງທຶນໃດໜຶ່ງເພື່ອຫຼີກລ້ຽງຄວາມສ່ຽງຕໍ່ຊັບສິນ ແລະ ທຶນຮອນຂອງພໍ່ແມ່ປະຊາຊົນ.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງ ພໍ່ແມ່ປະຊາຊົນ, ຊາວຄ້າຂາຍ, ນັກທຸລະກິດທັງພາຍໃນ ແລະ ຕ່າງປະເທດ, ພະນັກງານ, ທະຫານ ແລະ ຕຳຫຼວດ, ຕະຫຼອດຮອດຜູ້ທີ່ອາໄສຢູ່ ສປປ ລາວ ໃນຂອບເຂດທົ່ວປະເທດຊາບ.

**ຫົວໜ້າຫ້ອງການ**

ທະນາຄານແຫ່ງ ສປປ ລາວ
ຫ້ອງການ

**ເພັດສະກາພອນ ແກ້ວວົງວິຈິດ**